# ການປະກາດວ່າດ້ວຍຫຼັກການ ແລະ ສິດທິຂັ້ນພື້ນຖານໃນການເຮັດວຽກ

## ການຕໍ່ສູ້ແຮງງານບັງຄັບ

**Q: ແຮງງານບັງຄັບແມ່ນຫຍັງ?**

ແຮງງານບັງຄັບ ຫຼືແຮງງານເກນ ຄື
ງານ ຫຼື ບໍລິການທັງມວນທີ່ໄດ້ມາຈາກບຸກຄົນໃດພາຍໃຕ້ການຂູ່ລົງໂທດ ແລະ ບຸກຄົນນັ້ນ ບໍ່ໄດ້ກະທຳດ້ວຍຄວາມເຕັມໃຈຂອງຕົນເອງ ຊຶ່ງວຽກນີ້ອາດເກີດຂື້ນໄດ້ໂດຍການບັງຄັບຈາກ ລັດ ຫຼື ບໍລິສັດເອກກະຊົນ ຫຼືບຸກຄົນທີ່ມີຄວາມຕັ້ງໃຈ ແລະ ອຳນາດທີ່ເຫນືອກວ່າຄົນງານ ໂດຍ ຄຸກຄາມດ້ວຍ ຄວາມຮຸນແຮງ ເຊັ່ນ ຄວາມຮຸນແຮງທາງຮ່າງກາຍ ຫຼື ການກົດຂີ່ທາງເພດ ການຈຳກັດຂອບເຂດພື້ນທີ່ການ ເຄື່ອນໄຫວຂອງບຸກຄົນຫຼືການກັກຂັງ ການຍຶດຄ່າຈ້າງຫຼື ຍຶດຄອງເອກກະສານສະແດງຕົນເພື່ອບັງຄັບໃຫ້ບຸກ ຄົນນີ້ຢູ່ເຮັດວຽກຕໍ່ໄປ ຫຼືການເຮັດໃຫ້ບຸກຄົນນັ້ນຕິດຢູ່ໃນບ່ວງຂອງການເປັນຫນີ້ທີ່ບໍ່ສາມາດຫລຸດພົ້ນໄດ້. ແຮງງານບັງຄັບ ເປັນຄວາມຜິດທາງ ອາຍາ ແລະ ເປັນການລະເມີດສິດທິມະນຸດສະຍະຊົນ.

**Q: ຮູບແບບທີ່ແຕກຕ່າງກັນຂອງແຮງງານບັງຄັບມີຫຍັງແດ່?**

ແຮງງານບັງຄັບມີຫຼາຍຮູບແບບ ບາງຮູບແບບມາຈາກການກະທຳໂດຍລັດ ແຕ່ສ່ວນໃຫຍ່ມາຈາກການກະທຳ ຂອງເສດຖະກິດເອກກະຊົນ. ແຮງງານບັງຄັບອາດ ເປັນຜົນລັບຂອງ ການຄ້າມະນຸດ ແລະ ການເຂົ້າເມືອງໂດຍ ຜິດກົດຫມາຍ ຊຶ່ງເປັນບັນຫາທີ່ກຳລັງເພີ້ມຂື້ນ ແລະ ມີຜົນກະທົບຕໍ່ທຸກພູມີພາກໃນໂລກ ຄົນງານທັງຍິງຊາຍ ອາດຖືກບັງຄັບ ໃຊ້ແຮງງານໄດ້ໃນ ຫຼາຍພາກທຸລະກິດ ໄດ້ແກ່ ພາກກະສິກຳ, ກໍ່ສ້າງ, ບໍ່ແຮ່ວຽກຮັບໃຊ້ໃນບ້ານ ລວມທັງການສະແຫວງ

ປະໂຫຍດຈາກທຸລະກິດທາງເພດ (ມີຜົນກະທົບຢ່າງຫຼວງຫຼາຍຕໍ່ຜູ້ຍິງ ແລະ ເດັກ). ເຫຍື່ອຂອງແຮງງານບັງຄັບມັກຈະມາຈາກຊົນກຸ່ມນ້ອຍທາງສັງຄົມ ແລະ ເຊື້ອຊາດ ທີ່ຖືກເລືອກປະຕິບັດ ແລະ ຜູ້ທີ່ດຳລົງຊີວິດ ແລະເຮັດວຽກທ່າມກາງຄວາມທຸກຍາກຂາເຂີນ ກົນໄກທີ່ໃຊ້ບັງຄັບແຮງງານ ໄດ້ແກ່: ການຕົກເປັນໜີ້ຜູກພັນ, ການເປັນທາດ, ການໃຊ້ແນວປະຕິບັດ ຂອງຮີດຄອງປະເພນີຢ່າງຜິດໆ ແລະ ລະບົບການຈັດຫາງານທີ່ລອກລວງ, ການບັງຄັບການ ໃຊ້ແຮງງານໂດຍລັດ ໄດ້ແກ່ຄວາມຕ້ອງການແຮງງານໂດຍບໍ່ ຊອບດ້ວຍກົດໝາຍຂອງກອງທັບ ແລະຮູບແບບຂອງການບັງຄັບໃຊ້ແຮງງານນັກໂທດ.

## Q: ແມ່ນຫຍັງຄືການບັງຄັບໃຊ້ແຮງງານນັກໂທດທີ່ບໍ່ອາດຍອມຮັບໄດ້?

ອະນຸສັນຍາສະບັບທີ 29 ຍອມໃຫ້ມີການບັງຄັບໃຊ້ແຮງງານ ນັກໂທດໄດ້ເທົ່າທີ່ ເປັນການກະທຳໂດຍຄຳການພິພາກສາຂອງສານແຫ່ງກົດໝາຍ ແລະ ກະທຳພາຍໃຕ້ການຄວບຄຸມ ແລະ ການກຳກັບກວດສອບຂອງລັດຖະບານ ເຖິງແມ້ວ່າອະນຸສັນຍາສະບັບທີ 105 ກຳໜົດຫ້າມການບັງຄັບໃຊ້ແຮງງານແມກະທັ້ງໃນສະພາບ ເຊັ່ນວ່ານີ້ ຫາກເປັນການບັງຄັບ ໃຊ້ແຮງງານເພື່ອການລົງໂທດບາງປະເພດ (ເບິ່ງໃນຄຳຖາມຕໍ່ໄປ). ທັງນີ້ຕ້ອງຫ້າມການວ່າ ຈ້າງນັກໂທດເຮັດວຽກທາງນອກໃຫ້ບໍລິສັດເອກກະຊົນ ຫຼື ບຸກຄົນໃດໆ ຫາກນັກໂທດນັ້ນບໍ່ໄດ້ເຕັມໃຈ ແຕ່ນັກໂທດສາມາດຕົກລົງທີ່ຈະເຮັດວຽກໃຫ້ແກ່ບໍລິສັດເອກກະຊົນໄດ້ ຍົກຕົວຢ່າງ: ໃນຮ້ານ ຄ້າໃນຄຸກ ຈົນເທົ່າທີ່ວຽກນີ້ກະທຳພາຍໃຕ້ການກຳກັບດູແລທີ່ເຫມາະສົມຂອງລັດຖະບານ.

## Q: ມາດຕະຖານລະຫວ່າງປະເທດທີ່ມີຢູ່ເພື່ອຂະຈັດແຮງງານບັງຄັບມີຫຍັງແດ່?

ILO ໄດ້ຮັບຮອງອະນຸສັນຍາທີ່ວ່າດ້ວຍແຮງງານບັງຄັບໃຊ້ມາສອງສະບັບ (ເຄື່ອງມື ທີ່ມີຜົນພູກພັນທາງກົດໝາຍຕໍ່ປະເທດສະມາຊິກ ILO ທີ່ໃຫ້ສັດຕະຍາບັນ). ສະບັບທຳອິດ ຄື ອະນຸສັນວ່າດ້ວຍແຮງງານບັງຄັບ ຄ.ສ. 1930 (ສະບັບທີ 29), ຮຽກຮ້ອງໃຫ້ຂະຈັດທຸກຮູບແບບຂອງການບັງຄັບໃຊ້ແຮງງານ. ອະນຸສັນຍານີ້ເສີມດ້ວຍ ອະນຸສັນຍາວ່າດ້ວຍການຂະຈັດແຮງງານບັງຄັບ ຄ.ສ.1957 (ສະບັບທີ 105) ຊຶ່ງຮັບຮອງໃນຊ່ວງເວລາທີ່ມີ ການບັງຄັບໃຊ້ແຮງງານເພື່ອປະ

ໂທຍດທາງການເມືອງຢ່າງແພ່ຫຼາຍ. ອະນຸສັນຍານີ້ຮຽກຮ້ອງໃຫ້ມີການປາບປາມ ແຮງງານບັງຄັບດ້ວຍວິທີການຕໍ່ໄປນີ້

- ການຂົ່ມຂູ່ທາງການເມືອງ ຫຼື ການສຶກສາ, ຫຼືການລົງໂທດເນື່ອງຈາກການສະແດງຄວາມຄິດເຫັນທາງ ການເມືອງ.
- ການລະດົມກຳລັງແຮງງານເພື່ອປະໂຫຍດຂອງການພັດທະນາເສດຖະກິດ.
- ວິໃນຂອງແຮງງານ.
- ການລົງໂທດຖານມີສ່ວນຮ່ວມໃນການນັດຢຸດງານ.
- ການເລືອກປະຕິບັດດ້ານເຊື້ອຊາດ ສັງຄົມ ສັນຊາດ ຫຼືສາດສະໜາ.

ເຄື່ອງມືທັງສອງສະບັບນີ້ຈັດເປັນອະນຸສັນຍາ " ຂັ້ນພື້ນຖານ " ຂອງ ILO ອັນຫມາຍເຖິງ ການມີເສລີພາບຈາກແຮງງານບັງຄັບ ພ້ອມກັນໄປກັບເສລີພາບໃນສະມາຄົມ ແລະສິດທິໃນການຮ່ວມເຈລະຈາຕໍ່ລອງ ແລະການຂະຈັດແຮງງານເດັກ ແລະການເລືອກປະຕິບັດໃນການເຮັດວຽກ ອັນເປັນສິ່ງຈຳເປັນທີ່ຂາດບໍ່ໄດ້ໃນອັນທີ່ຈະກ້າວໄປໃຫ້ເຖິງວຽກທີ່ມີຄຸນຄ່າ. ອານຸສັນຍາວ່າດ້ວຍແຮງງານບັງຄັບແມ່ນຖືກ ອະນຸມັດຢ່າງກ້ວາງຂວາງ. ອານຸສັນຍາສະບັບເລກທີ່.29 ຖືກອະນຸມັດໂດຍ ຄະແນນສຽງ 165 ສຽງໃນຈຳນວນສະມາຊິກຂອງ ILO ທັງຫມົດ 175, ອານຸສັນຍາສະບັບເລກທີ່.105 ຖືກ ອະ ນຸມັດໂດຍ ຄະແນນສຽງ 163 ສຽງ. ນອກຈາກນັ້ນ, ການຮຽກຮ້ອງຂອງ ILO ຕໍ່ກັບກົດເກນພື້ນຖານ ແລະ ສິດທິໃນວຽກງານ ແມ່ນ ຮຽກຮ້ອງ ໃຫ້ສະມາຊິກທຸກໆປະເທດ ນັບຖື ແລະ ສະໜັບສະໜຸນ ການຢຸດການ ໃຊ້ແຮງ ງານບັງຄັບ, ເຖິງແມ່ນວ່າພວກເຂົາບໍ່ທັນໄດ້ອະນຸມັດ ອານຸສັນຍາວ່າດ້ວຍ ແຮງງານບັງຄັບ ກໍ່ຕາມ.

## Q: ມີຄົນຫຼາຍເທົ່າໃດທີ່ຕົກຢູ່ໃນສະພາບແຮງງານບັງຄັບ?

ILO ຄາດປະເມີນວ່າມີຜູ້ຕົກເປັນເຫຍື່ອຂອງແຮງງານບັງຄັບທົ່ວໂລກບໍ່ນ້ອຍກວ່າ12.3 ລ້ານຄົນ. ໃນຈຳນວນນີ້ 9.8 ລ້ານຄົນຖືກກົດຂີ່ໂດຍບໍລິສັດ ຫຼື ບຸກຄົນເອກກະຊົນ, ໂດຍເປັນແຮງງານບັງຄັບຈາກຜົນການຄ້າມະນຸດ 2.4 ລ້ານຄົນ. ຈຳນວນທີ່ເຫຼືອອີກ 2.5 ລ້ານຄົນ ຖືກບັງຄັບໃຫ້ເຮັດວຽກໂດຍລັດຫຼືກອງກຳລັງທະຫານຝ່າຍກະບົດ ເຊິ່ງອາດມີເດັກອາຍຸຕ່ຳກວ່າ 18 ປີ ມີຖິງ ຮ້ອຍລະ 40-50 ຂອງແຮງງານບັງຄັບທັງຫມົດ. ເຫຍື່ອເກືອບທັງຫມົດຂອງແຮງງານບັງຄັບ

ໃນທຸລະກິດທາງເພດເປັນຍິງ ແລະ ເດັກ ແລະມີແມ່ຍິງ ແລະ ເດັກຢູ່ເຖິງຮ້ອຍລະ 56 ໃນການໃຊ້ບັງຄັບແຮງງານເພື່ອເອົາປຽບທາງເສດຖະກິດ.

ພົບວ່າມີຈຳນວນແຮງງານບັງຄັບຫຼາຍທີ່ສຸດໃນເອເຊຍປາຊີຟິກ (ຮ້ອຍລະ77 ຂອງທັງຫມົດ) ຕາມດ້ວຍ ລາຕິນອາເມລິກາ ແລະ ແຄລິບບ້ຽນ (ຮ້ອຍລະ 11).ໃນປະເທດອຸດສາຫະກຳມີເຫຍື່ອຂອງແຮງງານບັງຄັບປະມານຮ້ອຍລະ 3 ຂອງທັງຫມົດ ໂດຍສາມໃນ ສີ່ເປັນເຫຍື່ອຂອງການຄ້າມະນຸດດ້ວຍ.

**Q: ສາເຫດຂອງແຮງງານບັງຄັບມີຫຍັງແດ່?**

ແຮງງານບັງຄັບສ່ວນໃຫຍ່ມີຮາກຖານມາຈາກຄວາມທຸກຍາກ, ຄວາມບໍ່ສະເຫມີພາບ ແລະການເລືອກປະຕິບັດ ແລະ ສ່ວນຫຼາຍມີແຮງກະຕຸ້ນຈາກຄວາມມຸ້ງຫວັງທີ່ຈະກອບໂກຍເງິນລາຍໄດ້ຈາກຄົນງານທີ່ຕົກຢູ່ໃນສະພາບສ່ຽງ ຂາດການຄຸ້ມຄອງ ແລະຂາດການຮວມໂຕ. ໃນທຸກມື້ນີ້ບໍລິສັດຕົວແທນ ແລະ ບຸກຄົນເອກກະຊົນທີ່ເຮັດວຽກໃນເສດຖະກິດໃຕ້ດິນ ຫຼື ຜິດກົດຫມາຍເປັນຜູ້ສະແຫວງຜົນປະໂຫຍດລາຍໃຫຍ່ຈາກແຮງງານບັງຄັບ. ການຂາດກົດຫມາຍທີ່ພຽງພໍ ແລະ ການບັງຄັບໃຊ້ກົດຫມາຍທີ່ບົກພ່ອງເຮັດໃຫ້ບໍ່ມີການດຳເນີນຄະດີ ແລະ ລົງໂທດຜູ້ກະທຳຜິດ. ໃນບັນຍາກາດຂອງການລະເວັ້ນຈາກການລົງໂທດຜູ້ກະທຳຜິດ ນາຍຈ້າງ ຕົວແທນ ແລະ ຜູ້ຄ້າມະນຸດທີ່ຍັກຍອກກອບໂກຍຜົນປະໂຫຍດຈາກການບັງຄັບໃຊ້ແຮງງານ ກໍ່ຍິ່ງເປັນອັນຕະ ລາຍຫຼາຍຂຶ້ນເທົ່ານັ້ນ. ILO ຄາດປະມານວ່າລາຍໄດ້ຕໍ່ປີທີ່ມາຈາກແຮງງານບັງຄັບທີ່ເປັນເຫຍື່ອຂອງ ການຄ້າມະນຸດດ້ວຍມູນຄ່າເຖິງ 31.6 ພັນລ້ານໂດລາ ເຄິ່ງໜຶ່ງຂອງລາຍໄດ້ນີ້ຢູ່ໃນປະເທດອຸດສະຫະກຳ. ໃນອະດີດແຮງງານບັງຄັບມີປັດໃຈທາງການເມືອງເປັນສາເຫດ, ແຕ່ວ່າຈະມີສາເຫດຈາກການເມືອງ, ສັງຄົມ ຫຼື ເສດຖະກິດ ຕ້ອງບໍ່ມີແຮງງານບັງຄັບອີກຕໍ່ໄປໃນສັດຕະວັດທີ 21 .

**Q:. ຈະແກ້ບັນຫາໄດ້ແນວໃດ**

ການກຳຈັດແຮງງານບັງຄັບຕ້ອງເຮັດໄປພ້ອມກັນຫຼາຍດ້ານ.ໂດຍຈຳເປັນຕ້ອງມີຄວາມເຂົ້າໃຈທີ່ຊັດເຈນກ່ອນວ່າມີການໃຊ້ແຮງງານບັງຄັບໃນກໍລະນີທີ່ແຕກຕ່າງກັນໄດ້ຈັ່ງໃດ ມີຜູ້ໃດແດ່ທີ່ໄດ້ຮັບຜົນກະທົບ ແລະ ແນວໃດ. ປະເທດຕ່າງໆ ຕ້ອງກຳນົດນະໂຍບາຍ ແລະ ອອກກົດໝາຍທີ່ລະບຸໃຫ້ການໃຊ້ແຮງງານບັງຄັບໃນຮູບແບບ ຕ່າງໆ ເປັນສິ່ງຜິດກົດໝາຍ ແລະ ມີການນຳມາປະຕິບັດຢ່າງເຄັ່ງຄັດ ຕ້ອງຄຸ້ມຄອງເຫຍື່ອ ແລະ ມີການລົງ ໂທດຜູ້ກະທຳຜິດຢ່າງສາສົມ. ເຊິ່ງຈຳເປັນຕ້ອງມີການປະຕິບັດທີ່ ຫຼາກຫຼາຍທີ່ປັບໃຫ້ເຫມາະສົມກັບ ສະພາບຕົວຈິງຂອງປະເທດ ແລະ ຮູບແບບຂອງປັນຫາແຮງງານບັງຄັບທີ່ມີຢູ່ ໄດ້ແກ່ ການເພີ້ມຈິດສຳນຶກຂອງສາທາລະນະຊົນຕໍ່ອັນຕະລາຍຂອງແຮງງານບັງຄັບ, ການໃຫ້ໂອກາດທາງເລືອກດ້ານລາຍໄດ້ ແລະ ຝືມືແຮງງານແກ່ຄົນງານ ອົບພະຍົກທີ່ເຂົ້າເມືອງໂດຍຜິດກົດຫມາຍ ການບັງຄັບໃຊ້ກົດຫມາຍທີ່ເຂັ້ມງວດ, ການກວດສອບ ແລະ ການອອກກົດລະບຽບກ່ຽວກັບກິດຈະກຳຂອງບໍລິສັດຈັດຫາງານ ແລະ ການຟື້ນຟູ ແລະບູລະນາການກັບສູ່ສັງຄົມ ຂອງເຫຍື່ອຂອງແຮງງານບັງຄັບທີ່ໄດ້ຮັບຄວາມຊ່ວຍເຫຼືອ.

ໃນໄລຍະຍາວ, ການປົກປ້ອງແຮງງານບັງຄັບ ຂັ້ນທຳອິດແມ່ນເລັ່ງໄປສູ່ ການຫລຸດຜ່ອນ ຄວາມທຸກຍາກ ເຊັ່ນວ່າ: ການສ້າງໂອກາດໃນການຫາລາຍໄດ້, ການປະຕິຮູບທີ່ດິນ ແລະ ການຮັບປະກັນ ສິດທິຂອງຜູ້ໃຊ້ແຮງງານທັງຫມົດ

## Q: ແມ່ນຫຍັງຄືມາດຕະການທາງປະຕິບັດ ທີ່ ILO ກຳລັງດຳເນີນການຢູ່ເພື່ອກຳຈັດແຮງງານບັງຄັບ?

ເຄື່ອງມືພື້ນຖານເພື່ອສົ່ງເສີມການເຄົາລົບຕໍ່ຫຼັກການ ແລະ ສິດທິຂັ້ນພື້ນຖານ ຄືການຕິດຕາມກວດສອບຂອງ ILO ກ່ຽວກັບການປະຕິບັດຕາມອະນຸສັນຍາທີ່ໃຫ້ ສັດຕະຍາບັນຄວບຄູ່ໄປກັບການໃຫ້ຄວາມຮ່ວມມືທາງວິຊາການເພື່ອຊ່ວຍເຫຼືອລັດບັນລຸເຖິງພັນທະເຫຼົ່ານີ້. ໂຄງການປະຕິບັດການພິເສດເພື່ອຊະນະການບັງຄັບໃຊ້ແຮງ ງານ ເລີ່ມການປະຕິບັດການເມື່ອ ປີ 2002. ໂຄງການໄດ້ດຳເນີນການວິໃຈ ກະຕຸ້ນຈິດສຳນຶກ ແລະການພິທັກສິດທິ ການໃຫ້ຄຳແນະນຳທາງນະໂຍບາຍ ການສ້າງສະມັດຖະນະ ແລະກິດຈະກຳທາງການປ້ອງກັນ ແລະຟື້ນຟູໂດຍ ການເຮັດວຽກຮ່ວມກັບອົງກອນຫຸ້ນສ່ວນຂອງ ILO - ລັດຖະບານ ອົງກອນນາຍຈ້າງ ແລະລູກຈ້າງ.

ຄວາມລິເລີ່ມທີ່ກຳລັງດຳເນີນການ ມີດັ່ງນີ້:

***ບລາຊິນ*** - ໂຄງການຂອງ ILO ໃນບລາຊິນມີເປົ້າໝາຍເພື່ອຕໍ່ສູ້ກັບການສະແຫວງຫາປະໂຫຍດຈາກຄົນທາວງກທີ່ນຳໄປສູ່ແຮງງານທາດ ສະເພາະຢ່າງຍິ່ງໃນການລ້ຽງງົວຄວາຍ ແລະ ການກະເສດ. ໂຄງການໄດ້ຊ່ວຍເພີ້ມພະລັງ ແລະ ປະສານກິດຈະກຳຂອງໜ່ວຍງານຂອງລັດຖະບານ ແລະ ຫຸ້ນສ່ວນຫຼັກອື່ນໆ ໃນການຕໍ່ສູ້ກັບແຮງງານບັງຄັບ ແລະ ການປ້ອງກັນຄົນງານທີ່ໄດ້ຮັບຄວາມຊ່ວຍເຫຼືອຈາກການກັບໄປສູ່ການຖືກກົດຂີ່ອີກ. ໂດຍເນັ້ນການສ້າງກົນໄກທີ່ມີປະສິດທິພາບເພື່ອໃຫ້ມີການບັງຄັບໃຊ້ກົດໝາຍລວມທັງການລົງໂທດທີ່ສາສົມຕໍ່ຜູ້ກະທຳຜິດຈາກການບັງຄັບໃຊ້ແຮງງານ.

***ອາຊີຕາເວັນອອກສຽງໃຕ້*** - ຄົນງານຮັບໃຊ້ໃນບ້ານເປັນກຸ່ມສ່ຽງຕໍ່ການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ. ໃນອິນໂດເນເຊຍ ແລະ ຟີລິບປິນ, ILO ກຳລັງລົນນະລົງພິທັກສິດທິທາງກົດໝາຍທີ່ຂະຫຍາຍໄປເຖິງເລື່ອງສິດທິຄົນງານໄປເຖິງຄົນງານຮັບໃຊ້ໃນບ້ານນຳ. ອົງການທີ່ພວມມີການລວມຕົວກັນຕັ້ງຂື້ນຂອງຄົນງານຮັບໃຊ້ ໃນບ້ານເປັນເຄື່ອງຊ່ວຍແກ້ປັນຫາການຖືກໂດດດ່ຽວ ແລະການປົກປ້ອງສິດທິຂອງຄົນງານເຫຼົ່ານີ້. ILO ກຳລັງໃຫ້ຄວາມຊ່ວຍເຫຼືອແກ່ອົງກອນເຫຼົ່ານີ້ຢູ່ ແລະ ອົງກອນຂອງຄົນງານອົບພະຍົກໃນ ຮົງກົງ, ມາເລເຊຍ ແລະ ສິງກະໂປ ເພື່ອເຂົ້າເຖິງ ແລະເສີມພະລັງພັນທະມິດກັບສະຫະພາບແຮງງານ.

***ສະຫະລາດອານາຈັກ, ເຢຍລະມັນ, ປອກຕຸຍການ, ໂປໂລຍ, ໂລມານີ, ອູເກຣອິນ ແລະ ມອນໂດວາ*** - ໂຄງການນີ້ມີ ເປົ້າໝາຍເພື່ອຊ່ວຍກຳຈັດການຄ້າມະນຸດເພື່ອການບັງຄັບໃຊ້ແຮງງານລວມທັງການເອົາປຽບທາງເພດທົ່ວເອີລົບ. ໂຄງການນີ້ເນັ້ນການເພີ້ມພະລັງການຄວບຄຸມທາງບໍລິຫານເພື່ອກວດຈັບການໃຊ້ແຮງງານບັງຄັບ ແລະ ທົບທວນການເຮັດວຽກຂອງບໍລິສັດຈັດຫາງານ ທີ່ລວມໄປເຖິງການເດີນທາງ, ການແຕ່ງງານ ຕະລອດຈົນຮູບແບບ ແລະ ໜ່ວຍງານອື່ນໆທີ່ຈັດວ່າເປັນສ່ວນໜຶ່ງຂອງການປະຕິບັດການຂອງຜູ້ຄ້າມະນຸດ.

***ຈີນ*** - ການລິເລີ່ມໃຫມ່ທີ່ມຸ້ງຜົນສຳເລັດສູງຂອງ ILO ເນັ້ນການເສີມບົດບາດຂອງສະຖາບັນແຮງງານໃນການຕໍ່ສູ້ກັບການຄ້າມະນຸດທັງພາຍໃນ ແລະ ຈາກປະເທດຈີນ. ໂຄງການນີ້ມຸ່ງໄປສູ່ການເສີມພະລັງຂອງກອບງານດ້ານກົດຫມາຍ ແລະ ນະໂຍບາຍເພື່ອຕໍ່ສູ້ກັບແຮງງານບັງຄັບ ແລະ ການຄ້າມະນຸດ ໂດຍການເຮັດວຽກກັບກະຊວງຕ່າງໆ ເຊັ່ນ: ກະຊວງຄວາມຫມັ້ນຄົງແຫ່ງລັດ, ກະຊວງຍຸດຕິທຳ, ກະຊວງຄວາມຫມັ້ນທາງສັງຄົມ ແລະ ແຮງງານເພື່ອ ໃຫ້ການອົບຮົມແກ່ເຈົ້າຫນ້າທີ່ແຮງງານ ແລະ ເຈົ້າຫນ້າບັງຄັບໃຊ້ກົດຫມາຍອື່ນໆ ໃນລະດັບຂອບເຂດ ແລະເພື່ອໃຫ້ອົງກອນນາຍຈ້າງ ແລະລູກຈ້າງໄດ້ເຂົ້າມາມີສ່ວນຮ່ວມໃນການປ້ອງກັນການຄ້າມະນຸດ ແລະການລະບຸຕົວເຫຍື່ອ.

***ອິນເດຍ*** - ໂຄງການຂອງ ILO ເລັງໄປສູ່ການປ້ອງກັນແຮງງານຂັດຫນີ້ ໂດຍໃຊ້ມາດຕະການເພີ້ມສັກກະຍະພາບທາງສັງຄົມ ແລະ ເສດຖະກິດ ເຊັ່ນ ສິນເຊື່ອລາຍຍ່ອຍ ການຝຶກອົບຮົມຝີມືແຮງງານ ແລະ ຜູ້ປະກອບການ. ການສຶກສາ ຂັ້ນພື້ນຖານ ແລະ ການເພີ້ມພະລັງໃຫ້ແກ່ກຸ່ມແມ່ຍິງທີ່ຊ່ວຍເຫຼືອຕົນເອງ. ດັ່ງຕົວຢ່າງ ໂຄງການລັດທາມິວນາດູ (Tamil Nadu) ຂອງອິນເດຍ ແມ່ນເຮັດວຽກໃນເຂດພື້ນທີ່ແຫ້ງແລ້ງທີ່ການກະສິກຳເປັນຫຼັກໃນການຄອງຊີບແບບ ເສດກິດຊົນນະບົດ. ໂຄງການນີ້ມີກຸ່ມເປົ້າຫມາຍເປັນຄອບຄົວທີ່ທຸກຍາກທີ່ສຸດ 2,200 ຄົນ (ຮ້ອຍລະ 12 ມີແມ່ຍິງເປັນ ຫົວຫນ້າເປັນຫົວຄອບຄົວ) ທີ່ສ່ຽງຕໍ່ການຕົກເປັນແຮງງານຂັດຫນີ້ ຫຼືມີສະມາຊິກໃນຄອບຄົວທີ່ກຳລັງຕົກ ເປັນແຮງງານຂັດຫນີ້ຢູ່ໃນຫຼາຍໆກໍລະນີ. ກັບສະສົມເງິນຂອງຄອບຄົວທີ່ເປັນທີ່ຈະເກັບອອມເງິນທີ່ຫາມາໄດ້ໃນແຕ່ລະມື້ດ້ວຍຄວາມສະມັກໃຈ ຊຶ່ງເປັນທີ່ນິຍົມຫຼາຍກວ່າການເກັບອອມເງິນເທື່ອລະຫຼາຍໆ.

***ປາກິດສະຖານ*** - ວຽກພາກສະຫນາມທີ່ເນັ້ນການຟື້ນຟູຄອບຄົວຮາລີທີ່ຫາກໍ່ຫລຸດພົ້ນຈາກການເປັນແຮງງານຂັດຫນີ້ທີ່ອາໃສຢູ່ໃນ ແຄັມ 7 ແຫ່ງພາຍໃນ ແລະ ອ້ອມແອ້ມເມືອງໄຮເດີລາບັດໃນມົນທົນສິນ. ມາດຕະການ ທົດລອງໃນການໃຫ້ເຊົ່າທີ່ດິນຈະຊ່ວຍໃຫ້ຜູ້ເຊົ່າມີໂອກາດໄດ້ເປັນເຈົ້າຂອງບ້ານ ແລະ ມີສິດທິຕ່າງໆ ຫຼາຍຂື້ນ. ສ່ວນກິດຈະກຳອື່ນໆ ມີແຜນງານສ້າງສະມັດຖະນະໃຫ້ແກ່ຫນ່ວຍງານລັດ ແລະ ສານຕໍ່ການຝຶກອົບຮົມໃນລະດັບທ້ອງຖິ່ນແກ່ຄະນະກຳມະການເຝົ້າລະວັງ ແລະ ການໃຫ້ບໍລິການເປັນແນວທາງເພື່ອຊ່ວຍເຫຼືອດ້ານກົດຫມາຍ ແກ່ຄອບຄົວຮາລີທີ່ຕ້ອງການຮຽກຮ້ອງຕໍ່ສານ.

***ເນປານ*** - ໂຄງການໃນເນປານຈະຊ່ວຍຟື້ນຟູຜູ້ໃຫຍ່ ແລະ ເດັກປະມານ 14,000 ຄົນທີ່ເຄີຍເປັນແຮງງານຂັດໜີ້ໂດຍໃຊ້ວິທີການຈັດຝຶກອົບຮົມໃຫ້ການສຶກສາ, ການປັບປຸງສະພາບຄວາມເປັນຢູ່, ການໃຫ້ສິນເຊື່ອລາຍຍ່ອຍ, ການສົ່ງເສີມອົງການຂອງຄົນງານໃນພາກກະສິກຳ ແລະ ການບັງຄັບໃຊ້ຄ່າຈ້າງຂັ້ນຕ່ຳ. ມີການໃຫ້ຄວາມຊ່ວຍເຫຼືອແບບບູລະນາການໂດຍຄວາມຮ່ວມມືຢ່າງໃກ້ຊິດກັບລັດຖະບານ ແລະ ໜ່ວຍງານອື່ນໆ ໄດ້ຊ່ວຍຄອບຄົວໃນ ການເພີ້ມການສ້າງຄວາມຫຼາກຫຼາຍ ແລະ ການສ້າງສະຖຽນລະພາບໃຫ້ແກ່ລາຍໄດ້ ແລະ ການປັບປຸງສຸກຂະພາບ ແລະ ຄວາມເປັນຢູ່ ລວມທັງການທົດສອບມາດຕະການ ການປະກັນສຸກຂະພາບແບບກຸ່ມທີ່ຖືກ ປັບໃຫ້ເໝາະກັບຄວາມຈຳເປັນຂອງຄອບຄົວທີ່ທຸກຍາກ. ຢ່າງໃດກໍ່ຕາມສະຖານນະການທາງການເມືອງໃນປັດຈຸບັນ ໃນເນປານເຮັດຄວາມຍຸ້ງຍາກຢ່າງຫຼວງຫຼາຍໃນການເຮັດກິດຈະກຳໃດໆ ທາງດ້ານແຮງງານ ແລະ ສັງຄົມ.

***ການາ ແລະ ໄນຈີເລຍ*** - ມີການສ້າງງານເພື່ອກຳຈັດການຄ້າມະນຸດໃນອັບຟິລິກາຕາເວັນຕົກ, ILO ໄດ້ເຮັດວຽກຮ່ວມກັບລັດ, ຫຸ້ນສ່ວນສັງຄົມ ແລະ ອົງກອນເອກກະຊົນໃນ ໄນຈີເລຍ ແລະ ການາ ເພື່ອຈັດທຳ ແລະບັງຄັບໃຊ້ແຜນປະຕິບັດການລະດັບຊາດເພື່ອຕໍ່ຕ້ານການຄ້າມະນຸດ. ມີການວິໃຈດ້ານການເຄື່ອນຍ້າຍແຮງງານ, ການຄ້າມະນຸດ ແລະ ແຮງງານບັງຄັບໃນຫຼາຍພູມີພາກທີ່ເປັນຕົ້ນທາງຂອງເຫຍື່ອການຄ້າມະນຸດທີ່ມີການລະດົມຊຸມຊົນເພື່ອປ້ອງກັນການຫຼອກລວງໃນການຈັດຫາຄົນງານ ແລະ ເພື່ອເພີ້ມຈິດສຳນຶກໃນການເຝົ້າລະວັງ ໃນການຍ້າຍຖິ່ນຮວມທັງການຟື້ນຟູຜູ້ທີ່ໄດ້ເດີນທາງກັບຄືນຖິ່ນ.

***ບານການ ແລະ ເອີລົບຕາເວັນອອກ*** - ວັດຖຸປະສົງຂອງໂຄງການໃນອານເບນີ, ມານໂດວາ ແລະ ອຸເກຣອິນ ຄື ເພື່ອປັບປຸງນະໂຍບາຍ ແລະກົດໝາຍກ່ຽວກັບການຍົກຍ້າຍຖິ່ນຖານໂດຍໃຊ້ການກວດສອບບໍລິສັດຈັດຫາງານ ແລະ ການເຈລະຈາຕົກລົງແບບທະວິພາຄີກ່ຽວກັບການແລກປ່ຽນແຮງງານ. ເມື່ອຄຳນຶງເຖິງຄວາມກວ້າງຂວາງຂອງບັນຫາການຄ້າມະນຸດຈາກອານບານີໄປຍັງເກລັກ ແລະ ອີຕາລີ, ILO ໄດ້ສົ່ງເສີມໃຫ້ຄວາມຊ່ວຍເຫຼືອທາງວິຊາການເຮັດຂໍ້ຕົກລົງເຈລະຈາແບບທະວິພາຄີເພື່ອປ້ອງກັນການຄ້າເດັກ ແລະ ການສົ່ງເຫຍື່ອຄືນສູ່ປະເທດ.